

# ແຂວງຢຸນນານ ແລະ ປະເທດລາວ ຮ່ວມກັນປົກປ້ອງສຸຂະພາບຂອງປະຊາຊົນ

## ປະຊາຊົນທ້ອງຖິ່ນມີທາງເລືອກ ດ້ານການປິ່ນປົວຫຼາຍກວ່າເກົ່າ

ໂຮງໝໍແຂວງຫຼວງພະບາງ ໄດ້ຮັບການຊ່ວຍເຫຼືອຈາກ ສປ ຈີນ ຊຶ່ງໄດ້ຮັບການສ້າງຕັ້ງຂຶ້ນ ໃນຕົ້ນສະຕະວັດທີ 21. ໃນເວລານັ້ນ, ແຂວງຢຸນນານ ກໍໄດ້ເຂົ້າຮ່ວມວຽກງານການກໍ່ສ້າງ. ໄປຄຽງຄູ່ກັບປະຊາກອນຂອງແຂວງຫຼວງພະບາງ ໄດ້ເພີ່ມຂຶ້ນຢ່າງຕໍ່ເນື່ອງ ແລະ ຄວາມຮຽກຮ້ອງຕ້ອງການຂອງປະຊາຊົນ ໃນການບໍລິການດ້ານການແພດນັບມື້ນັບສູງຂຶ້ນ, ອຸປະກອນຮັບໃຊ້ຕ່າງໆໃນໂຮງໝໍ ຕ້ອງໄດ້ຮັບການຍົກລະດັບຕື່ມອີກ.

ການປັບປຸງ ແລະ ຍົກລະດັບຄັ້ງນີ້ ລວມມີການກໍ່ສ້າງຕຶກພະແນກພາຍນອກ ແລະ ພະແນກເສັ້ນເລືອດຫົວໃຈ, ຫໍພັກຊ່ຽວຊານຈີນ, ສະຖານີບໍາບັດນໍ້າເປື້ອນ, ອ່າງນໍ້າດັບເພີງ ແລະ ຫ້ອງຈັກປໍ້າສູບນໍ້າດັບເພີງ, ພ້ອມທັງສະໜອງອຸປະກອນທີ່ກ່ຽວຂ້ອງຕ່າງໆ, ຈຸດປະສົງແມ່ນເພື່ອປັບປຸງຍົກລະດັບ ໂຮງໝໍແຂວງຫຼວງພະບາງ ໃຫ້ເປັນໂຮງໝໍໃຈກາງ ທາງພາກເໜືອຂອງລາວ.

ພາຍໃຕ້ຄວາມພະຍາຍາມຮ່ວມກັນຂອງຈີນ ແລະ ລາວ. ປັດຈຸບັນ ໂຮງໝໍແຂວງຫຼວງພະບາງ ໄດ້ມີໂສມໜ້າໃໝ່: ການອອກແບບຂອງເຂດລໍຖ້າ, ສວນດອກໄມ້ ແລະ ອື່ນໆ ລ້ວນແຕ່ເຮັດໃຫ້ຄົນຮູ້ສຶກມີຄວາມສະບາຍໃຈ; ສໍາລັບຂໍ້ມູນການບົ່ງມະຕິເປັນ 3 ພາສີຄື: ພາສາລາວ, ພາສາຈີນ ແລະ ພາສາອັງກິດ, ໂຮງໝໍໄດ້ນໍາໃຊ້ລະບົບບັນທຶກອາການຄົນເຈັບແບບເອເລັກໂຕຼນິກ, ອຸປະກອນການແພດແບບອັດສະລິຍະ ແລະ ການແພດທາງໄກ, ຊຶ່ງໄດ້ປັບປຸງຂັ້ນຕອນການປິ່ນປົວໃຫ້ດີຂຶ້ນ ແລະ ເຮັດໃຫ້ການປິ່ນປົວຂອງຄົນເຈັບ ຍິ່ງມີຄວາມສະດວກສະບາຍກວ່າເກົ່າ.

ທ່ານ ດຣ ພູວະນາ ອະນຸລັກຄໍາ ຜູ້ອໍານວຍການໂຮງໝໍແຂວງຫຼວງພະບາງ ກ່າວວ່າ: ການປັບປຸງ ແລະ ຍົກລະດັບຄັ້ງນີ້, ໄດ້ຍົກລະດັບທັງຮາດແວ ແລະ ຊອບແວຂອງໂຮງໝໍ. ຈໍານວນຕຽງໂຮງໝໍໄດ້ເພີ່ມຂຶ້ນຈາກ 150 ຕຽງ ເປັນ 200 ຕຽງ, ໄດ້ເພີ່ມພະແນກໃໝ່ ເຊັ່ນ: ພະແນກກະທົບບາດເຈັບ ແລະ ພະແນກຜ່າຕັດຫົວໃຈ ແລະ ອື່ນໆ ພ້ອມທັງເຂດໃໝ່ຫຼາຍແຫ່ງ ເຊັ່ນ: ຫ້ອງ ICU, ເຂດສະເພາະຄົນເຈັບ ເປັນຕົ້ນ. ໃນມຸມມອງຂອງທ່ານ, ໄປຄຽງຄູ່ກັບ ຄວາມສາມາດການປິ່ນປົວຂອງໂຮງໝໍ ໄດ້ຮັບການຍົກສູງຂຶ້ນ, ປະຊາຊົນທ້ອງຖິ່ນກໍຈະມີທາງເລືອກໃໝ່ ໃນການປິ່ນປົວພະຍາດ, ຄົນເຈັບບໍ່ຕ້ອງເດີນທາງໄກ ໄປນະຄອນຫຼວງວຽງຈັນ ຫຼື ຕ່າງປະເທດ ເພື່ອປິ່ນປົວພະຍາດ, ຊຶ່ງຈະເປັນການຫຼຸດຕົ້ນທຶນດ້ານການປິ່ນປົວໃຫ້ໜ້ອຍລົງ ແລະ ປະຢັດເວລາໃນການປິ່ນປົວພະຍາດ.

## ຄົນທັງຫຼາຍ ນັບມື້ນັບຮັກແພງກັນ ໃນການປະຕິບັດໂຄງການ

ການປັບປຸງ ແລະ ຍົກລະດັບຂອງໂຄງການຄັ້ງນີ້, ຍັງລວມທັງການຝຶກອົບຮົມ ແລະ ການຊ່ວຍເຫຼືອດ້ານເຕັກນິກໃຫ້ແກ່ພະນັກງານການແພດລາວອີກດ້ວຍ. ໃນຖານະເປັນຝ່າຍສະໜັບສະໜູນດ້ານເຕັກນິກ, ໂຮງໝໍປະຊາຊົນເລກ 1 ແຂວງຢຸນນານ ຈະໃຫ້ການຊ່ວຍເຫຼືອເປັນ 3 ປີລຽນຕິດ, ລວມທັງການສົ່ງພະນັກງານບໍລິຫານ ແລະ ຜູ້ຊ່ຽວຊານໄປປະຈໍາຢູ່ລາວ ເພື່ອຍົກລະດັບການຄຸ້ມຄອງບໍລິຫານ ແລະ ຄຸນນະພາບການປິ່ນປົວຂອງໂຮງໝໍໃຫ້ສູງຂຶ້ນ.

ພາຍຫຼັງຈັດພິທີມອບ-ຮັບໂຄງການດັ່ງກ່າວ, ທ່ານ ດຣ ພູວະນາ ອະນຸລັກຄໍາ ໄດ້ນໍາພາຄະນະແພດໝໍ ເດີນທາງໄປນະຄອນຄຸນໝິງ ເພື່ອເຂົ້າຮ່ວມຊຸດຝຶກອົບຮົມ ຢູ່ໂຮງໝໍປະຊາຊົນເລກ 1 ແຂວງຢຸນນານ. ທ່ານ ແນະນໍາໃຫ້ຮູ້ວ່າ: ພາຍໃຕ້ຂອບການຮ່ວມມືການບໍລິການດ້ານການແພດ ແລະ ສາທາລະນະສຸກລາວ-ຈີນ, ໃນຊຸມປີຜ່ານມາ, ພະນັກງານການແພດຂອງໂຮງໝໍແຂວງຫຼວງພະບາງ ໄດ້ຮັບການຝຶກອົບຮົມດ້ານທິດສະດີ ແລະ ພຶດຕິກໍາດ້ານການແພດ ຢູ່ໂຮງໝໍປະຊາຊົນເລກ 1 ແຂວງຢຸນນານ; ໃນຂະນະດຽວກັນ, ຜູ້ຊ່ຽວຊານແຂວງຢຸນນານ ກໍໄດ້ໄປປະຈໍາການຢູ່ໂຮງໝໍແຂວງຫຼວງພະບາງ ເພື່ອໃຫ້ການຊ່ວຍເຫຼືອເປັນປະຈໍາ.

ທ່ານ ເຢຍ ເລົ່າທໍ່, ເປັນທ່ານໝໍປະຈໍາຢູ່ໂຮງໝໍແຂວງຫຼວງພະບາງ ເຄີຍໄປຝຶກອົບຮົບຢູ່ໂຮງໝໍປະຊາຊົນເລກ 1 ແຂວງຢຸນນານ ເປັນເວລາ 3 ເດືອນ ໃນປີ 2019. ທ່ານ ກ່າວວ່າ: “ໃນໄລຍະຝຶກອົບຮົມ, ຂ້ອຍມີອາຈານສອນສະເພາະ, ເຂົາເຈົ້າໄດ້ເອົາທິດສະດີປະສານສົມທົບກັບການປະຕິບັດຕົວຈິງ ຖ່າຍທອດຄວາມຮູ້ໃຫ້ຂ້ອຍ, ເຮັດໃຫ້ຂ້ອຍໄດ້ຮຽນຮູ້ບັນດາບົດຮຽນປະສົບການ ຫຼາຍສົມຄວນ, ມີປະໂຫຍດຫຼາຍຕໍ່ວຽກງານຂອງຂ້ອຍໃນສູ່ມື້ນີ້.”

ທ່ານ ຢາງຈຽ້ນກົວ (Yang Jianguo) ຜູ້ອໍານວຍການຮັບເໝົາກໍ່ສ້າງໂຄງການຊ່ວຍເຫຼືອປັບປຸງ ແລະ ຍົກລະດັບໂຮງໝໍແຂວງຫຼວງພະບາງ ຂອງບໍລິສັດ ຊີໂນໄຮໂດຣ ເລກທີ 14 ຂອງຈີນ ກ່າວວ່າ: ທັງສອງຝ່າຍຈີນ ແລະ ລາວ ໄດ້ແລກປ່ຽນສົນທະນາກັນຢ່າງເຕັມປ່ຽມ, ເຮັດໃຫ້ທັງສອງຝ່າຍນັບມື້ນັບເຂົ້າໃຈກັນເປັນຢ່າງດີ. ວິສາຫະກິດຈີນ ໄດ້ເຄົາລົບນັບຖືຕໍ່ຮີດຄອງປະເພນີ, ຄວາມຊົມເຄີຍຂອງປະເທດລາວ ແລະ ມີສ່ວນຮ່ວມຢ່າງຕັ້ງໜ້າ ໃນວຽກງານສາທາລະນະປະໂຫຍດຂອງປະຊາຊົນທ້ອງຖິ່ນ, ຊຶ່ງເຮັດໃຫ້ປະຊາຊົນ ໄດ້ເພີ່ມທະວີຄວາມເຂົ້າໃຈຕໍ່ໂຄງການ, ໃຫ້ການສະໜັບສະໜູນການດໍາເນີນໂຄງການ, ຄົນທັງຫຼາຍນັບມື້ນັບມີຄວາມຮັກແພງກັນ.

ທ່ານ ຊຸຍຈຽ້ນຄຸນ (Cui Jiankun) ພະນັກງານຂອງສູນແລກປ່ຽນເສດຖະກິດ ແລະ ເຕັກນິກສາກົນແຂວງຢຸນນານ ກ່າວວ່າ: ນີ້ແມ່ນພຶດຕິກໍາຕົວຈິງໃນການຮ່ວມກັນສ້າງຄູ່ຮ່ວມຊາຕາກໍາ ລາວ-ຈີນ. ຄົນຈີນ ແລະ ຄົນລາວ ທີ່ເຮັດວຽກໃນຂົງເຂດຕ່າງກັນ ໄດ້ອຸທິດກໍາລັງວັງຊາຂອງຕົນ, ຮ່ວມແຮງຮ່ວມໃຈກັນ ແລະ ກ້າວເດີນໄປໜ້າພ້ອມໆກັນ ຊຶ່ງໄດ້ສ່ອງແສງໃຫ້ເຫັນເຖິງສອງປະເທດຈີນ ແລະ ລາວ ເປັນຄູ່ຮ່ວມຊາຕາກໍາທີ່ດີ ແລະ ຮ່ວມກັນມຸ່ງໜ້າໄປສູ່ອະນາຄົດທີ່ດີງາມ.

ບົດໂດຍ: Liu Ziyu, ວິມິນ ຢາງ; ພາບໂດຍ: ບໍລິສັດ ຊີໂນໄຮໂດຣ ເລກທີ 14, ໜັງສືພິມລາຍວັນຢຸນນານ

ວັນທີ 16 ສິງຫາຜ່ານມາ, ໂຄງການຊ່ວຍເຫຼືອປັບປຸງ ແລະ ຍົກລະດັບໂຮງໝໍແຂວງຫຼວງພະບາງ ຈາກ ສປ ຈີນ ໄດ້ຈັດພິທີມອບ-ຮັບ ແລະ ນໍາໃຊ້ຢ່າງເປັນທາງການ. ໂຄງການນີ້ແມ່ນໂຄງການຊ່ວຍເຫຼືອຕ່າງປະເທດລະດັບຊາດທີ່ກະຊວງການຄ້າແຫ່ງ ສປ ຈີນ ມອບໜ້າທີ່ໃຫ້ແຂວງຢຸນນານເປັນຜູ້ຈັດຕັ້ງປະຕິບັດ, ເປັນໝາກຜົນອັນສໍາຄັນທີ່ຈີນ ແລະ ລາວ ລົງເລິກການຮ່ວມມືມິດຕະພາບ ແລະ ຊ່ວຍຊຸກຍູ້ການພັດທະນາພາລະກິດສາທາລະນະສຸກຂອງລາວ.








## ຊຸດຝຶກອົບຮົມການແລກປ່ຽນ ແລະ ຮ່ວມມືດ້ານເຕັກນິກການແພດສໍາລັບປະເທດລາວ ຈັດຂຶ້ນຢູ່ນະຄອນຄຸນໝິງ

ລະຫວ່າງ ວັນທີ 25 ສິງຫາ - ວັນທີ 1 ກັນຍານີ້, ຊຸດຝຶກອົບຮົມການແລກປ່ຽນ ແລະ ຮ່ວມມືດ້ານເຕັກນິກການແພດສໍາລັບອາຊີໃຕ້ ແລະ ຕາເວັນອອກສ່ຽງໃຕ້ (ລາວ) 2024 ທີ່ຈັດໂດຍໂຮງໝໍໃນເຄືອມະຫາວິທະຍາໄລຢຸນນານ ໄດ້ຈັດຂຶ້ນຢູ່ນະຄອນຄຸນໝິງ ຢ່າງສໍາເລັດຜົນ.

ຊຸດຝຶກອົບຮົມຄັ້ງນີ້ ໄດ້ເຊີນພະນັກງານແພດໝໍ ໃນພະແນກສຸກເສີນຈໍານວນ 30 ທ່ານ, ຈາກໂຮງໝໍສູນກາງ 5 ແຫ່ງຂອງປະເທດລາວ ລວມທັງໂຮງໝໍມິດຕະພາບ ແລະ ໂຮງໝໍແມ່ ແລະ ເດັກ ນະຄອນຫຼວງວຽງຈັນ ເຂົ້າຮ່ວມ, ຊຶ່ງໄດ້ດໍາເນີນການແລກປ່ຽນ ແລະ ຝຶກອົບຮົມທາງການແພດ ໃນຫຼາຍຂົງເຂດທີ່ສໍາຄັນ ເຊັ່ນ: ການປິ່ນປົວຄົນເຈັບທີ່ຖືກສານພິດແບບສຸກເສີນ, ການປິ່ນປົວອາການຊຶມເຊື້ອຢ່າງຮ້າຍແຮງ ແລະ ການປິ່ນປົວບາດແຜສຸກເສີນ ເປັນຕົ້ນ.

ຊຸດຝຶກອົບຮົມຄັ້ງນີ້ ບໍ່ພຽງແຕ່ໄດ້ສ້າງໂອກາດການຮຽນທີ່ດີ ໃຫ້ແກ່ນັກສໍາມະນາກອນເທົ່ານັ້ນ, ແຕ່ຫາກຍັງໄດ້ສ້າງເວທີການແລກປ່ຽນ ແລະ ຮ່ວມມືດ້ານເຕັກນິກການແພດ ລະຫວ່າງ ລາວ-ຈີນ ອີກດ້ວຍ. ທ່ານ ໝໍ ຟີລິ ຢູ່ພະແນກສຸກເສີນ ໂຮງໝໍມິດຕະພາບ ກ່າວວ່າ: ເນື້ອໃນຂອງຊຸດຝຶກອົບຮົມຄັ້ງນີ້ ແມ່ນແທດເໝາະກັບການປະຕິບັດຕົວຈິງຫຼາຍ ແລະ ມີຜົນດີຕໍ່ວຽກງານປະຈໍາວັນຂອງພວກເຮົາ ຢ່າງຫຼວງຫຼາຍ, ຫວັງວ່າໃນອະນາຄົດ ຈະມີໂອກາດເຂົ້າຮ່ວມຊຸດຝຶກອົບຮົມແບບນີ້ອີກ.

ບົດໂດຍ: ວິມິນ ຢາງ

(ສະໜອງຂໍ້ມູນໂດຍ: ສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສ່ຽງໃຕ້ແຂວງຢຸນນານ)

ynzhanba@163.com
laos.yunnangateway.com